ເລກທີ :............./ ດຈລ
ວັນທີ :.....................

# ນະໂຍບາຍດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ

## ❖ ຄວາມປອດໄພ

ການປະຕິບັດງານດ້ານຄວາມປອດໄພ ແລະ ສຸຂະພາບຂອງແຮງງານແມ່ນປັດໃຈຂອງການບໍລິຫານວຽກງານການກໍ່ສ້າງທີ່ຕ້ອງເຮັດຄວບຄູ່ໄປກັບຜົນງານຄຸນນະພາບຂອງ ບໍລິສັດ ກຸ່ມດວງຈະເລີນພັດທະນາກໍ່ສ້າງ ຈຳກັດ ຜູ້ດຽວ. ຖືເປັນນະໂຍບາຍທີ່ຕ້ອງການໃຫ້ເປັນມາດຕະຖານສູງສຸດເພື່ອໃຫ້ເກີດຄວາມປອດໄພ ແລະ ຄວບຄຸມການສູນເສຍຈາກອຸບັດຕິເຫດໃຫ້ມີປະສິດທິພາບໂດຍ :




ພະນັກງານທຸກຄົນໄດ້ເອົາໃຈໃສ່ໃນດ້ານການດູແລຮັກສາສຸຂະພາບ ແລະ ຄວາມປອດໄພຂອງຕົນ ແລະ ຜູ້ກ່ຽວຂ້ອງກັບການປະຕິບັດງານ. ນອກຈາກນັ້ນທາງບໍລິສັດໃຫ້ຖືເອົາຄວາມປອດໄພເປັນວຽກງານທີ່ຈະຕ້ອງເຮັດໃຫ້ສຳເລັດ ແລະ ຈະຕ້ອງຄຳນຶງເຖິງກ່ອນສະເໝີ.

## ❖ ສິ່ງແວດລ້ອມ

ໃນການດຳເນີນງານການກໍ່ສ້າງຂອງບໍລິສັດ ອາດກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມໄດ້ໃນບາງກໍລະນີ. ແຕ່ເຖິງຢ່າງໃດກໍ່ຕາມບໍລິສັດພວກເຮົາຮັບຮູ້ເຖິງຜົນກະທົບເປັນສິ່ງສຳຄັນນອກເໜືອຈາກການປະຕິບັດງານຕາມລະບຽບ ແລະ ກົດລະບຽບໃນການອະນຸລັກສິ່ງແວດລ້ອມ, ບໍລິສັດພວກເຮົາໄດ້ກຽມມາດຕະການຕ່າງໆ ເພື່ອຮັບມືກັບຜົນກະທົບຕໍ່ສິ່ງແວດລ້ອມທີ່ອາດຈະເກີດຂຶ້ນຈາກການດຳເນີນງານຂອງບໍລິສັດດັ່ງຕໍ່ໄປນີ້:

➢ **ຄຸນນະພາບທາງອາກາດ :**

- ອະນາໄມສະຖານທີ່ກໍ່ສ້າງ ເພື່ອປ້ອງກັນການກະແຈກກະຈາຍຂອງຂີ້ຝຸ່ນຕະຫຼອດໄລຍະເວລາການກໍ່ສ້າງ.
- ໃຊ້ນ້ຳເພື່ອສີດໃສ່ບໍລິເວນທີ່ອາດຈະເຮັດໃຫ້ເກີດການກະແຈກກະຈາຍຝຸ່ນເຊັ່ນ : ພື້ນທີ່ເປີດ ຫຼື ການຂຸດຄົ້ນ.
- ນຳໃຊ້ຕາໜ່າງອ້ອມພື້ນທີ່ກໍ່ສ້າງທີ່ຕິດກັບຊຸມຊົນໃກ້ຄຽງ ເພື່ອຈະກັ່ນຕອງຂີ້ຝຸ່ນໃນລະດັບທີ່ຍອມຮັບໄດ້.
- ກວດກາ, ບຳລຸງ, ຮັກສາເສັ້ນທາງການຈະລາຈອນສາທາລະນະທີ່ນຳໃຊ້ໃຫ້ຢູ່ໃນສະພາບເດີມ ຫຼື ດີກວ່າເກົ່າ ພ້ອມທັງປະຕິບັດລະບຽບການຂົນສົ່ງຢ່າງເຂັ້ມງວດ.

➢ **ແຫຼ່ງຊຸມຊົນ :**

- ນຳໃຊ້ເຄື່ອງຈັກທີ່ມີການບຳລຸງຮັກສາຢູ່ສະເໝີເພື່ອປ້ອງກັນສຽງດັງ.
- ຕິດປ້າຍປະກາດແຈ້ງລາຍລະອຽດຊື່ ແລະ ສະຖານທີ່ຕິດຕໍ່ ເພື່ອຮັບຄຳຮ້ອງ ແລະ ຂໍ້ສະເໜີ.
- ໃຫ້ຄວາມຊ່ວຍເຫຼືອແກ່ຊຸມຊົນ ດັ່ງທີ່ບໍລິສັດມີນະໂຍບາຍໃນການຊ່ວຍເຫຼືອສັງຄົມ.

ບໍລິສັດໄດ້ປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການກວດກາຄຸນນະພາບຂອງສະພາບແວດລ້ອມເບື້ອງຕົ້ນໃນໄລຍະການກໍ່ສ້າງຢ່າງເຂັ້ມງວດ ເພື່ອໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນເທົ່າທີ່ຈະເປັນໄປໄດ້. ບໍລິສັດຍັງປະຕິບັດຕາມຄຳແນະນຳຂອງຜູ້ຊ່ຽວຊານທີ່ກ່ຽວຂ້ອງ ແລະ ອີງການຈັດຕັ້ງຂອງລັດຖະບານ.

ບໍລິສັດ ກຸ່ມດວງຈະເລີນພັດທະນາກໍ່ສ້າງ ຈຳກັດ ຜູ້ດຽວ
ກິໂລແມັດ 19 ຖະໜົນວຽງຈັນ 450 ປີ, ບ້ານໂພນທອງ
ເມືອງໄຊເຊດຖາ, ນະຄອນຫຼວງວຽງຈັນ
ໂທ: +85621 229006; ແຟັກ: +85621 229002
ອີເມວ: info@ddcgroup.la
ເວບໄຊ: www.ddcgroup.la